ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະພັກ ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0155 /ຄພກປ
ນະຄອນຫຼວງວຽງຈັນ, ວັນທີ 07 JUN 2012

# ມະຕິຕົກລົງ

## ຂອງຄະນະປະຈຳພັກກະຊວງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ຂອງກະຊວງ ກະສິກຳ ແລະ ປ່າໄມ້

- ອີງຕາມມະຕິຂອງກົມການເມືອງ ເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012.
- ອີງຕາມຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ, ສະບັບເລກທີ 11/ຄລສພ,ລົງວັນທີ 28ມີນາ2012
- ອີງຕາມແຈ້ງການຂອງຄະນະຮັບຜິດຊອບຊີ້ນຳເຮັດທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ສະບັບເລກທີ 04/ຄຊທສ, ລົງວັນທີ 23/05/2012.
- ອີງຕາມການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ, ສະບັບເລກທີ 0567/ກຈພ, ລົງວັນທີ 17/05/2012.

ຄະນະປະຈຳພັກກະຊວງ ກະສິກຳ ແລະ ປ່າໄມ້ ອອກມະຕິຕົກລົງ :

ມາດຕາ 1. ແຕ່ງຕັ້ງຄະນະຮັບຜິດຊອບສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ດັ່ງມີລາຍຊື່ລຸ່ມນີ້:

| | | |
|---|---|---|
| 1. ສະຫາຍ ດຣ. ຄຳຜາດ ສຸຣິນພູມີ | ຄະນະປະຈຳພັກກະຊວງ, ລັດຖະມົນຕີຊ່ວຍວ່າການ ກະຊວງ ກປ | ເປັນຫົວໜ້າ |
| 2. ສະຫາຍ ນ. ປິ່ງຄຳ ລາຊະສິມມາ | ຄະນະປະຈຳພັກກະຊວງ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຮອງ |
| 3. ສະຫາຍ ຄຳພັນ ເໜືອນສິດທິດາ | ກຳມະການຄະນະພັກກະຊວງ, ຫົວໜ້າຫ້ອງການ ກປ | ເປັນຄະນະ |
| 4. ສະຫາຍ ໄຊປຣາເດດ ຈຸລະມະນີ | ກຳມະການຄະນະພັກກະຊວງ, ຫົວໜ້າກົມແຜນການ | ເປັນຄະນະ |
| 5. ສະຫາຍ ເປັງ ອິງໄຊ | ຫົວໜ້າກົມກວດກາ | ເປັນຄະນະ |

ຄະນະດັ່ງກ່າວມີໜ້າທີ່:

- ຕົກລົງແຜນດຳເນີນງານ, ໂຄງການ ແລະ ກິດຈະກຳລະອຽດ ແຕ່ລະດ້ານ. ກຳນົດເຂດຈຸດສຸມ ໃຫ້ຈະແຈ້ງ ແລະ ກຳນົດບາດກ້າວດຳເນີນການເຮັດທົດລອງໃຫ້ລະອຽດ.
- ຕິດຕາມຊຸກຍູ້ໜ່ວຍງານວິຊາການບັນດາກົມ, ກອງ ແລະ ທ້ອງຖິ່ນໃນການສ້າງ ແລະ ຈັດຕັ້ງປະຕິບັດ, ແຜນການ, ແຜນດຳເນີນງານ ພ້ອມທັງການຈັດຕັ້ງປະຕິບັດ ແຜນດຳເນີນງານ ແລະ ໂຄງການຕ່າງໆ ກ່ຽວກັບການເຮັດທົດລອງ.
- ສະຫຼຸບຕີລາຄາຜົນໄດ້ຮັບ ແລະ ຖອດຖອນບົດຮຽນຈາກການເຮັດທົດລອງ ແລ້ວສັງລວມລາຍງານ ໃຫ້ຂັ້ນເທິງຮັບຊາບ ແຕ່ລະໄລຍະ.

ມາດຕາ **2.** ແຕ່ງຕັ້ງໜ່ວຍງານວິຊາການ (ກອງເລຂາ):

| | | |
|---|---|---|
| 1. ສະຫາຍ ຄຳພັນ ເໜືອນສິດທິດາ | ກຳມະການຄະນະພັກກະຊວງ, ຫົວໜ້າຫ້ອງການ ກປ | ເປັນຫົວໜ້າ |
| 2. ສະຫາຍ ໄຊປຣາເດດ ຈຸລະມະນີ | ກຳມະການຄະນະພັກກະຊວງ, ຫົວໜ້າກົມແຜນການ | ເປັນຮອງ |
| 3. ສະຫາຍ ນ. ດຣ. ມົນທາທິບ ຈັນເພັງໄຊ | ກຳມະການຄະນະພັກກະຊວງ, ຫົວໜ້າກົມປູກຝັງ | ເປັນຄະນະ |
| 4. ສະຫາຍ ບຸນຂວາງ ຄຳບຸນເຮືອງ | ກຳມະການຄະນະພັກກະຊວງ, ຫົວໜ້າກົມລ້ຽງສັດ ແລະ ການປະມົງ | ເປັນຄະນະ |
| 5. ສະຫາຍ ດຣ. ສີລາວັນ ສະຫວັດວົງ | ກຳມະການຄະນະພັກກະຊວງ, ຫົວໜ້າກົມປ່າໄມ້ | ເປັນຄະນະ |
| 6. ສະຫາຍ ດຣ. ບຸນຖອງ ບົວຫອມ | ກຳມະການຄະນະພັກກະຊວງ, ຫົວໜ້າສະຖາບັນຄົ້ນຄວ້າ ກປ ແຫ່ງຊາດ | ເປັນຄະນະ |
| 7. ສະຫາຍ ທອງພັດ ວົງມະນີ | ກຳມະການຄະນະພັກກະຊວງ, ຫົວໜ້າກອງສົ່ງເສີມ ກປ | ເປັນຄະນະ |
| 8. ສະຫາຍ ພູມີ ພູມະນີວົງ | ກຳມະການຄະນະພັກກະຊວງ, ຫົວໜ້າກົມກວດກາປ່າໄມ້ | ເປັນຄະນະ |
| 9. ສະຫາຍ ໄມກອງ ພອນພິມມະວົງ | ຫົວໜ້າກົມຊົນລະປະທານ | ເປັນຄະນະ |
| 10. ສະຫາຍ ຄຳພອນ ຣາຊະຈັກ | ຮອງຫົວໜ້າກົມກວດກາ | ເປັນຄະນະ |
| 11. ສະຫາຍ ແສງປະເສີດ ມັດທຸຈັນ | ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຄະນະ |

ຄະນະດັ່ງກ່າວມີໜ້າທີ່:

- ຊ່ວຍວຽກຄະນະຮັບຜິດຊອບ **3** ສ້າງ ຂອງກະຊວງ ກະສິກຳ ແລະ ປ່າໄມ້.
- ປຶກສາຫາລືແບ່ງຄວາມຮັບຜິດຊອບໃຫ້ແຕ່ລະສະຫາຍໃນຄະນະປະສານງານຢ່າງຈະແຈ້ງເໝາະສົມ
- ຄົ້ນຄວ້າກຳແໜ້ນຢ່າງເລິກເຊິ່ງ ມະຕິຂອງກົມການເມືອງ ເລກທີ**03**/ກມສພ, ລົງວັນທີ**15** ກຸມພາ **2012** ຄຳສັ່ງແນະນຳ ເລກທີ **11** ຂອງຄະນະເລຂາທິການສູນກາງພັກ, ພ້ອມທັງສ້າງແຜນການເຄື່ອນໄຫວ ປະຈຳເດືອນ, ງວດ ຂອງຄະນະຊີ້ນຳ, ຮ່າງແຜນດຳເນີນງານ ແລະ ໂຄງການຕ່າງໆ ແຕ່ລະດ້ານກ່ຽວ

ກັບການຈັດຕັ້ງເຮັດທົດລອງ, ຄົ້ນຄວ້າວຽກຈຸດສຸມຂອງຂະແໜງການ ແລະ ບາດກ້າວດຳເນີນການເຮັດທົດລອງລະອຽດ ແລ້ວນຳສະເໜີ ຄະນະຮັບຜິດຊອບ 3 ສ້າງ ຂອງກະຊວງກະສິກຳ ແລະ ປ່າໄມ້ພິຈາລະນາ.

- ພົວພັນປະສານສົມທົບກັບ ກອງເລຂາ ຄະນະຮັບຜິດຊອບ 3 ສ້າງຕາມມະຕິຕົກລົງ ຂອງຄະນະເລຂາທິການສູນກາງພັກ ເລກທີ 01/ຄລສພ.ຄຊທສ ລົງວັນທີ 20 ເມສາ 2012.
- ຊ່ວຍຄະນະຮັບຜິດຊອບ 3 ສ້າງຂອງກະຊວງ ໃນການຕິດຕາມກວດກາ, ຕີລາຄາວິເຄາະວິໃຈບັນຫາຕ່າງໆທີ່ເກີດຂຶ້ນໃນບັ້ນທົດລອງ ຂອງກະຊວງກະສິກຳ ແລະ ປ່າໄມ້ ຢ່າງທັນການ ແລະ ແທດເໝາະກັບຄວາມເປັນຈິງພ້ອມທັງສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດແລະຕີລາຄາຢ່າງພາວະວິໃສກ່ຽວກັບການເຮັດທົດລອງ ເພື່ອຖອດຖອນບົດຮຽນ.
- ໃຫ້ແຕ່ລະສະຫາຍ ໃນຄະນະໜ່ວຍງານ ວິຊາການ ( ກອງເລຂາ ) ແຕ່ງຕັ້ງຜູ້ຊ່ວຍວຽກຂອງຕົນຕາມຄວາມເໝາະສົມ.

ມາດຕາ 3. ມອບໃຫ້ ຄະນະພັກຮາກຖານ, ຄະນະໜ່ວຍພັກ ຂອງບັນດາກົມ, ກອງ, ສະຖາບັນ ແຕ່ງຕັ້ງຄະນະຮັບຜິດຊອບເຮັດທົດລອງຂັ້ນຂອງຕົນ ເພື່ອປະສານກັບກອງເລຂາຄະນະຮັບຜິດຊອບເຮັດທົດລອງ3 ສ້າງ ຂອງກະຊວງ ກະສິກຳ ແລະ ປ່າໄມ້.

ມາດຕາ 4. ມອບໃຫ້ບັນດາສະຫາຍ ທີ່ໄດ້ຮັບການແຕ່ງຕັ້ງຕາມມາດຕາ 1 ແລະ 2 ຈົ່ງປະສານສົມທົບກັນ. ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງປະກອບສ່ວນໃນວຽກງານ 3 ສ້າງ ຢ່າງຕັ້ງໜ້າ ແລະ ຖືເອົາການຜັນຂະຫຍາຍວຽກດັ່ງກ່າວ ເຂົ້າໃນຂະແໜງການຕົນ.

- ໃຫ້ແບ່ງຄວາມຮັບຜິດຊອບແຕ່ລະສະຫາຍ ໃນຄະນະໃຫ້ຈະແຈ້ງ, ປະຕິບັດລະບອບປະຊຸມປຶກສາຫາລືແກ້ໄຂບັນຫາຕ່າງໆ ໃຫ້ທັນສະພາບການ.

ມາດຕາ 5. ມະຕິຕົກລົງສະບັບນີ້ມີຜົນນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ. ຄະນະປະຈຳພັກກະຊວງ ກະສິກຳ ແລະ ປ່າໄມ້

ເລຂາ

ວິໄລວັນ ພົມເຂ

<u>ບ່ອນນຳສົ່ງ</u> :

| | |
|---|---|
| - ຄະນະພັກ ກປ ສະຫາຍ ລະ 1ສະບັບ | 15 ສະບັບ(ເພື່ອປະຕິບັດ) |
| - ຫ້ອງວ່າການສູນກາງພັກ | 1 ສະບັບ |
| - ຄະນະໂຄສະນາອົບຮົມສູນກາງພັກ | 1 ສະບັບ |
| - ຫ້ອງວ່າການລັດຖະບານ | 1 ສະບັບ |
| - ຄະນະພັກຮາກຖານ, ຄະນະໜ່ວຍພັກ, ໜ່ວຍລະ 1 ສະບັບ | 11 ສະບັບ |
| - ບັນດາສະຫາຍທີ່ຖືກແຕ່ງຕັ້ງ ສະຫາຍລະ | 1 ສະບັບ |
| -ເກັບມ້ຽນ | 1 ສະບັບ |